ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 03 ຫາ 07 ມິຖຸນາ 2024



ພິທີປູກຕົ້ນໄມ້ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີປູກຕົ້ນໄມ້ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2024

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ເພື່ອສົ່ງເສີມການປູກຕົ້ນໄມ້ ແລະ ຟື້ນຟູປ່າ ຕາມທິດທາງນະໂຍບາຍຂອງພັກ ແລະ ລັດ ທີ່ມີຄາດໝາຍຈະເພີ່ມເນື້ອທີ່ປົກຫຸ້ມຂອງປ່າ ໃຫ້ໄດ້ 70% ທັງເປັນການເປີດຂະບວນການປູກຕົ້ນໄມ້, ໂຄສະນາ ເຜີຍແຜ່ ວັນປູກຕົ້ນໄມ້ແຫ່ງຊາດ ເພີ່ມຄວາມປົກຫຸ້ມປ່າໄມ້ ມີພື້ນທີ່ສີຂຽວ ແລະ ເປັນບ່ອນພັກຜ່ອນ ທັງເປັນແຫຼ່ງສະໜອງແກ່ນພັນໄມ້ທີ່ມີຄຸນນະພາບໃຫ້ແກ່ການປູກປ່າໃນອະນາຄົດ. ສະນັ້ນ, ໃນວັນທີ 01 ມິຖຸນາ 2024 ນີ້ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດພິທີປູກຕົ້ນໄມ້ ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2024 ຂຶ້ນຢູ່ທີ່ເຂດບ້ານໂພສີ ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານ ຂອງ ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຂົ້າຮ່ວມມີ ທ່ານ ພູວົງ ວົງຄຳຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມ, ຜູ້ຕາງໜ້າຈາກບໍລິສັດ, ຜູ້ປະກອບການ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຮສ. ປອ. ສົມຫວັງ ພິມມະວົງ ຫົວໜ້າກົມປ່າໄມ້ ໄດ້ລາຍງານກ່ຽວກັບສະພາບການຟື້ນຟູປ່າ ແລະ ປູກໄມ້ ໃນຂອບເຂດທົ່ວປະເທດ ໄລຍະຜ່ານມາໃຫ້ຮູ້ວ່າ: ເນື້ອທີ່ປູກໄມ້ໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈາກ 452 ເຮັກຕາ ໃນປີ 1978 ມາເປັນ 1.384 ເຮັກຕາ ໃນປີ 1985 ແລະ ໃນປີ 2023 ສັງລວມເນື້ອທີ່ປູກໄມ້ໃນທົ່ວປະເທດໄດ້ທັງໝົດ 579.373 ເຮັກຕາ. ໃນນັ້ນ, ເປັນການລົງທຶນຂອງບໍລິສັດ, ຜູ້ປະກອບການ, ປະຊາຊົນ

ແລະ ພາກລັດ ຕາມລຳດັບ ຊຶ່ງປະກອບມີຊະນິດພັນໄມ້ຄື: ໄມ້ຢາງພາລາ, ໄມ້ວິກ, ໄມ້ສັກ, ໄມ້ເກດສະໜາ ແລະ ຊະນິດພັນໄມ້ພື້ນເມືອງອີກຈຳນວນໜຶ່ງ. ສະເພາະປີ 2023 ສາມາດຈັດຕັ້ງປະຕິບັດໄດ້ 21.554 ເຮັກຕາ ເທົ່າກັບ 51,31% ຂອງແຜນການ (42.000 ເຮັກຕາ). ສຳລັບເນື້ອທີ່ປູກຕົ້ນໄມ້ໃນຄັ້ງນີ້ກວມເອົາ 5 ເຮັກຕາ ແລະ ມີເບ້ຍໄມ້ປູກ 5.000 ກວ່າເບ້ຍ ປະກອບດ້ວຍ ໄມ້ຕີ້ວ, ໄມ້ຍາງ, ໄມ້ດູ່ ປູກໃນພື້ນທີ່ໃກ້ຄຽງປ່າສະຫງວນແຫ່ງຊາດ ພູພະນັງ ເຂດບ້ານໂພສີ (ກຸ່ມບ້ານ ໂພນທອງ) ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ເພື່ອເຮັດໃຫ້ພິທີດັ່ງກ່າວມີຄວາມໝາຍສຳຄັນ ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໃນນາມປະທານພິທີ ໄດ້ຮ່ວມກັນປູກຕົ້ນໄມ້ ພ້ອມດ້ວຍບັນດາແຂກທີ່ເຂົ້າຮ່ວມພາຍໃນງານຢ່າງເປັນຂະບວນຟົດຟື້ນ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;